**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງອຸດສາຫະກຳ ແລະ ການຄ້າ

ກົມຈັດຕັ້ງ ແລະ ພະນັກງານ

0317----

ເລກທີ ........../ກຈພງ

ນະຄອນຫຼວງວຽງຈັນ, ວັນທີ: ...13...ພຶດສະພາ 2022

# ປະກາດຮັບສະໝັກສອບເສັງບັນຈຸເຂົ້າເປັນລັດຖະກອນໃໝ່ ປີ 2022

- ອີງຕາມ ຂໍ້ຕົກລົງຂອງນາຍົກລັດຖະມົນຕີ ວ່າດ້ວຍການແບ່ງຕົວເລກລັດຖະກອນໃໝ່ ປີ 2022 ສະບັບເລກທີ 15/ນຍ; ລົງວັນທີ 19 ເມສາ 2022.
- ອີງຕາມ ຂໍ້ຕົກລົງຂອງລັດຖະມົນຕີກະຊວງອຸດສາຫະກຳ ແລະ ການຄ້າ ວ່າດ້ວຍການແບ່ງປັນຕົວເລກລັດຖະກອນໃໝ່ ປະຈຳປີ 2022 ໃຫ້ຂັ້ນສູນກາງ (ບັນດາກົມຢູ່ອ້ອມຂ້າງກະຊວງ) ແລະ ຂັ້ນທ້ອງຖິ່ນ ສະບັບເລກທີ 0556/ອຄ.ກຈພງ, ລົງວັນທີ 09 ພຶດສະພາ 2022.
- ອີງຕາມ ຂໍ້ຕົກລົງຂອງລັດຖະມົນຕີ ກະຊວງອຸດສາຫະກຳ ແລະ ການຄ້າ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງກົມຈັດຕັ້ງ ແລະ ພະນັກງານ ສະບັບເລກທີ 0113/ອຄ.ກຈພງ, ລົງວັນທີ 17 ກຸມພາ 2021.

ກົມຈັດຕັ້ງ ແລະ ພະນັກງານ ກະຊວງອຸດສາຫະກຳ ແລະ ການຄ້າ ແຈ້ງມາຍັງທ່ານທີ່ມີຄວາມສົນໃຈ ເພື່ອສະໝັກເຂົ້າສອບເສັງບັນຈຸເຂົ້າເປັນລັດຖະກອນໃໝ່ ປີ 2022 **ຈຳນວນ 03 ໂກຕ້າ** (**03ຕຳແໜ່ງ**), ໂດຍມີວິຊາສະເພາະທີ່ສອດຄ່ອງກັບຕຳແໜ່ງງານຂອງບັນດາກົມອ້ອມຂ້າງກະຊວງ, ດັ່ງມີລາຍລະອຽດລຸ່ມນີ້:

➢ **ດ້ານມາດຖານເງື່ອນໄຂລວມຂອງຜູ້ທີ່ຈະສະໝັກເຂົ້າສອບເສັງ:**

1. ຖືສັນຊາດລາວໂດຍກຳເນີດ, ມີອາຍຸບໍ່ເກີນ 35 ປີ.
2. ເປັນພົນລະເມືອງດີ, ມີຄຸນສົມບັດດີ, ມີຄວາມຈົງຮັກພັກດີຕໍ່ລະບອບ ປະຊາທິປະໄຕ ປະຊາຊົນ.
3. ບໍ່ເຄີຍຖືກສານປະຊາຊົນ ຕັດສິນລົງໂທດ ແລະ ບໍ່ຖືກລົງວິໄນຈາກອົງການຈັດຕັ້ງຕ່າງໆ.
4. ມີປະຫວັດການເຄື່ອນໄຫວຂອງຕົນ ແລະ ຄອບຄົວ ທີ່ຈະແຈ້ງ.
5. ມີວິຊາສະເພາະໃຫ້ສອດຄ່ອງກັບຕຳແໜ່ງງານທີ່ປະກາດຮັບສະໝັກ.
6. ມີສຸຂະພາບແຂງແຮງ ແລະ ມະນຸດສຳພັນດີ.

➢ **ດ້ານມາດຖານເງື່ອນໄຂສະເພາະຂອງຜູ້ທີ່ຈະສະໝັກເຂົ້າສອບເສັງ:**

I. **ຫ້ອງການກະຊວງ ( 01 ຕຳແໜ່ງ )**

- ປະລິນຍາຕີຂຶ້ນໄປ : ສາຂາວິຊາ ບໍລິຫານລັດ ແລະ ລັດຖະສາດ
- ສາມາດເວົ້າ, ອ່ານ, ຟັງ ແລະ ຂຽນພາສາຕ່າງປະເທດໃດໜຶ່ງ ໃນລະດັບກາງຂຶ້ນໄປ
- ມີຄວາມຮູ້ພື້ນຖານໃນການນຳໃຊ້ຄອມພິວເຕີ Microsoft Office ໃນລະດັບດີ


ກົມຈັດຕັ້ງ ແລະ ພະນັກງານ ; ກະຊວງອຸດສາຫະກຳ ແລະ ການຄ້າ.
ຕິດຕໍ່ສອບຖາມ: (+856-21) 454 903 ; ແຟັກ: (+856-21) 416 139.

II. **ກົມນະໂຍບາຍການຄ້າຕ່າງປະເທດ ( 01 ຕຳແໜ່ງ )**
- ປະລິນຍາຕີຂຶ້ນໄປ : ເສດຖະສາດລະຫວ່າງປະເທດ
- ຄວາມຮູ້ດ້ານພາສາອັງກິດ: ລະດັບກາງຂຶ້ນໄປ
- ມີປະສົບການເຮັດວຽກໃນອົງກອນໃດໜຶ່ງ

III. **ກົມການນຳເຂົ້າ ແລະ ສົ່ງອອກ ( 01 ຕຳແໜ່ງ )**
- ປະລິນຍາຕີຂຶ້ນໄປ : ເສດຖະສາດ, ການຄ້າ ຫຼື ກົດໝາຍການຄ້າ
- GPA 2.75 ຂຶ້ນໄປ
- ລະດັບພາສາອັງກິດ IELTS 6.0 ຫຼື TOEFL 550
- ມີປະສົບການເຮັດວຽກມາກ່ອນ ຈະພິຈາລະນາເປັນພິເສດ

➢ <u>ວິທີສະໝັກ</u>

❖ ໂຫຼດຟອມສະໝັກສອບເສັງໄດ້ທີ່:
- http://www.moic.gov.la/
- https://www.laotradeportal.gov.la/

❖ ເປີດດາວໂຫຼດຟອມ **ວັນທີ 16-20 ພຶດສະພາ 2022**

❖ ປິດຮັບສະໝັກຟອມສອບເສັງ **ວັນທີ 20 ພຶດສະພາ 2022** (ຕາມວັນເວລາລັດຖະການ).

❖ **ຜູ້ສະໝັກທີ່ມີມາດຖານເງື່ອນໄຂຖືກຕ້ອງຄົບຖ້ວນ ແລະ ໄດ້ຜ່ານການຄັດເລືອກເຂົ້າຮ່ວມສອບເສັງ ແມ່ນຈະໄດ້ຮັບການຕິດຕໍ່ຈາກກົມກ່ຽວຂ້ອງ** ໃນລະຫວ່າງ ວັນທີ 23-24 ພຶດສະພາ 2022.

❖ ກຳນົດມື້ສອບເສັງ **ວັນທີ 25 ພຶດສະພາ 2022 ເວລາ 8:30** ທີ່ຫ້ອງປະຊຸມໃຫຍ່ ຂອງກະຊວງອຸດສາຫະກຳ ແລະ ການຄ້າ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງບັນດາທ່ານເພື່ອຊາບ ແລະ ສະໝັກເຂົ້າຮ່ວມຕາມແຈ້ງການດ້ວຍ.

**ຫົວໜ້າກົມ**

ນ.ກິ່ງສະຄອນ ເພັດດາວເຮືອງ


ກົມຈັດຕັ້ງ ແລະ ພະນັກງານ ; ກະຊວງອຸດສາຫະກຳ ແລະ ການຄ້າ.
ຕິດຕໍ່ສອບຖາມ: (+856-21) 454 903 ; ແຟັກ: (+856-21) 416 139.